

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ


Embassy of the Lao PDR
1, Dalman Crescent
O'Malley, ACT 2606
Tel: (02) 6286 4595, Fax: (02) 6286 1910
E-mail: laoemb@bigpond.net.au
Website: laosembassy.net


ສະບັບທີ: 02/2011

## ຂ່າວສານສະຖານທູດ

### I. ການພັດທະນາເສດຖະກິດ-ສັງຄົມ ຂອງລາວ

ໃນສົກປີ 2009-2010 ທີ່ຜ່ານມາ ຕາມການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ຂອງລັດຖະບານ ອັນໄດ້ຍູ້ແຮງການພັດທະນາເສດຖະກິດບົນພື້ນຖານກົນໄກເສດຖະກິດຕະຫຼາດ ຕິດພັນກັບການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ຂະ-ຫຍາຍກໍາລັງການຜະລິດເປັນໜ້າທີ່ຕົ້ນຕໍ ສົ່ງເສີມການຜະລິດເປັນສິນຄ້າ ແກ້ໄຂບັນຫາການເງິນ ເຮັດໃຫ້ບັນຍາກາດການລົງທຶນພາຍໃນ ແລະ ຕ່າງປະເທດ ມີບາດກ້າວໃໝ່ ແລະ ໜັກແໜ້ນກ່ວາຊຸມປີຜ່ານມາ ສະແດງອອກໃນໄລຍະຊຸມປີ 2006-2010 ລວມຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍເພີ່ມຂຶ້ນ 12,10% ໂດຍບັນລຸໄດ້ 12.083,78 ຕື້ກີບ ສະເລ່ຍລາຍໄດ້ຕໍ່ຄົນຕໍ່ປີ ປະມານ 1.755 ໂດລາສະຫະລັດ ຫຼື ປະມານ 14 ລ້ານກີບ (ລື່ນກາດໝາຍ 3,4 ລ້ານກີບ). ສະເພາະສົກປີ 2009-2010 ໃນນະຄອນຫຼວງວຽງຈັນ ສາມາດບັນລຸຕົວເລກ GDP ໄດ້ 12.180 ຕື້ກີບ ຫຼື ເພີ່ມຂຶ້ນ 12,17% ໃນນັ້ນ ກະສິກໍາເພີ່ມຂຶ້ນ 9,70% ກວມ 17,65% ຂອງ GDP ອຸດສາຫະກໍາ-ກໍ່ສ້າງ ເພີ່ມຂຶ້ນ 13,30% ກວມ 45,88% ຂອງ GDP ແລະ ການບໍລິການລວມພາສີເພີ່ມຂຶ້ນ 12,09% ກວມ 36,47% ຂອງ GDP ສະ-ເລ່ຍລາຍໄດ້ຕໍ່ຄົນຕໍ່ປີ ປະມານ 2.000 ໂດລາ ຫຼື ປະມານ 16 ລ້ານກີບ.

ສໍາລັບ 9 ເດືອນຂອງສົກປີ 2010-2011 ການລົງທຶນຂອງຕ່າງປະເທດ ທີ່ນະຄອນ-ຫຼວງວຽງຈັນ ໄດ້ອອກອະນຸຍາດມີທັງໝົດ 16 ໂຄງການ ມູນຄ່າ 199 ລ້ານໂດລາ ຫຼື ປະ-ມານ 1.580 ຕື້ກີບ ແລະ ການລົງທຶນພາຍໃນມີ 20 ໂຄງການ ມູນຄ່າ 335,77 ຕື້ກີບ. ສະເພາະການລົງທຶນຂອງ ສປ ຈີນ ຢູ່ ສປປ ລາວ ກໍຄືນະຄອນຫຼວງວຽງຈັນ ໃນສົກປີ 2009-2010 ລວມມີ 68 ໂຄງການ ລວມມູນຄ່າທັງໝົດ 356,7 ລ້ານໂດລາ ຫຼື ປະມານ 2.750 ຕື້ກີບ ຊຶ່ງຈັດຢູ່ໃນອັນດັບທີໜຶ່ງຂອງບັນດາປະເທດທີ່ມາລົງທຶນ ຢູ່ ສປປ ລາວ.

## II. ຂ່າວອື່ນໆ.

### ໄພພິບັດທາງທຳມະຊາດ ຢູ່ໃນ ສປປ ລາວ

ອີງຕາມຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດ ແລະ ບັນດາກະຊວງຂະແໜງ-ການກ່ຽວຂ້ອງ ລາຍງານຜົນເສຍຫາຍຈາກໄພທຳມະຊາດນໍ້າຖ້ວມ ທີ່ເກີດຈາກອິດທິພົນພາຍຸຮາຍມາ ແລະ ພາຍຸນົກເຕັນໃນຄັ້ງທີ່ຜ່ານມານັ້ນ ສະພາບຄວາມເສຍຫາຍໄດ້ກະທົບຢູ່ບັນດາແຂວງທາງພາກເໜືອ, ກາງ ແລະ ພາກໃຕ້ ລວມທັງໝົດ 12 ແຂວງຢູ່ໃນ ສປປ ລາວ. ໃນນັ້ນເຂດທີ່ໄດ້ຮັບຜົນກະທົບໂດຍກົງແມ່ນມີ 96 ເມືອງ 1.790 ບ້ານ ແລະ ໂດຍມີຜູ້ຖືກຜົນກະທົບ 429.954 ຄົນ ເສຍຊີວິດ 30 ຄົນ ເນື້ອທີ່ການຜະລິດ 64.472 ເຮັກຕາ ເສັ້ນທາງຄົມມະນາຄົມປ່ເພ 323 ເສັ້ນ ຂົວ 42 ແຫ່ງ ໂຮງຮຽນ ໂຮງໝໍ ສຸກສາລາ ໄຟຟ້າ ນໍ້າປະປາ ສະຖານທີ່ທ່ອງທ່ຽວ ແລະ ພື້ນຖານອຸດສາຫະກຳການຄ້າ ເຊິ່ງປະເມີນຄວາມເສຍຫາຍທັງໝົດປະມານ 1 ຕື້ກວ່າກີບ...

ປັດຈຸບັນລັດຖະບານລາວໄດ້ໃຫ້ການຊ່ວຍເຫຼືອແກ່ບັນດາແຂວງ ທີ່ໄດ້ຮັບຜົນກະທົບໄປແລ້ວ ລວມເປັນເງິນ ແລະ ວັດຖຸ ຈຳນວນທັງໝົດ 984.396.000 ກີບ. ເຖິງຢ່າງໃດກໍ່ຕາມການຊ່ວຍເຫຼືອດັ່ງກ່າວກໍ່ຍັງບໍ່ສາມາດຕອບສະໜອງໄດ້ເຖິງຜົນກະທົບ ແລະ ຄວາມເສຍຫາຍທັງຊີວິດ ແລະ ຊັບສິນຂອງພີ່ນ້ອງປະຊາຊົນລາວ ທີ່ເກີດຈາກຜົນຮ້າຍຂອງໄພທຳມະຊາດໃນຄັ້ງນີ້ ດັ່ງນັ້ນ ຈຶ່ງຮຽກຮ້ອງມາຍັງພີ່ນ້ອງຄົນລາວທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ຜູ້ທີ່ມີນໍ້າໃຈສັດທາຊ່ວຍບໍລິຈາກປັດໃຈຕາມຄວາມສະໝັກໃຈ ເພື່ອຊ່ວຍແບ່ງເບົາຄວາມສູນເສຍ ແລະ ຄວາມທຸກໂສກໃຫ້ແກ່ພໍ່ແມ່ປະຊາຊົນພວກເຮົາ ແລະ ເປັນກຳລັງໃຈເພື່ອພ້ອມກັນຜ່ານຜ່າຄວາມຍາກລຳບາກໃນຄັ້ງນີ້ ໃຫ້ຜ່ານພົ້ນໄປໂດຍດີ.

### ອົດສະຕຣາລີ ສືບຕໍ່ໃຫ້ທຶນການສຶກສາແກ່ ສປປ ລາວ

ນັບແຕ່ປີ 1963 ເປັນຕົ້ນມາ ອົດສະຕຣາລີ ໄດ້ມອບທຶນການສຶກສາໃຫ້ແກ່ບັນດານັກຮຽນ-ນັກສຶກສາ ພະນັກງານລັດຖະກອນ ທັງພາກລັດ-ເອກະຊົນ ສຳລັບການສຶກສາຮ່ຳຮຽນໃນລະດັບຂັ້ນຕ່າງໆ ໃນການຍົກລະດັບພາສາ ແລະ ສາຂາອາຊີບຕ່າງໆ. ມາຮອດປັດຈຸບັນມີນັກສຶກສາ ແລະ ພະນັກງານລັດຖະກອນ ຫຼາຍກວ່າ 1.000 ຄົນ ທີ່ໄດ້ຮັບທຶນການສຶກສາ. ສຳລັບປີ 2011 ນີ້ ລັດຖະບານອົດສະຕຣລີ ໂດຍຜ່ານອົງການ ອົດສເອດສ໌ (AusAID) ກໍໄດ້ສະໜອງທຶນ ໃຫ້ອີກ 50 ທຶນ ເຊິ່ງໃນນັ້ນມີທຶນສຳລັບພະນັກງານລັດຖະກອນ 26 ທຶນ ທຶນທີ່ເປີດໃນການສອບເສັງຄັດເລືອກເອົາມີ 24 ທຶນ ແລະ ໃນນີ້ ມີ 4 ທຶນ ໄປເຂົ້າຮ່ວມເຝິກອົບຮົມຢູ່ປະເທດອົດສະຕຣາລີ.

---